# ທຄຕລ ເຂົ້າຮ່ວມພິທີປູກຕົ້ນໄມ້ແຫ່ງຊາດ ປະຈຳປີ 2016

ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ແມ່ນມີຄວາມສຳຄັນ ແລະ ມີຄຸນປະໂຫຍດອັນໃຫຍ່ຫຼວງນອກຈາກຈະເປັນແຫຼ່ງວັດຖຸດິບແລ້ວຍັງເຮັດໜ້າທີ່ປົກປັກຮັກສາສິ່ງແວດລ້ອມ, ຮັກສາຄວາມສົມດຸນຂອງທຳມະຊາດ, ເປັນຄັງອາຫານ ແລະ ຢາປົວພະຍາດອັນລ້ຳຄ່າ ເຊິ່ງມີຄວາມຈຳເປັນຕໍ່ກັບການດຳລົງຊີວິດຂອງມວນມະນຸດ. ມາຮອດປັດຈຸບັນໂລກຂອງພວກເຮົາໄດ້ພົບກັບບັນຫາໂລກຮ້ອນ, ໄພແລ້ງ, ນ້ຳຖ້ວມ ແລະ ອື່ນໆ ເຊິ່ງສາເຫດຫຼັກແມ່ນມີການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້. ປະເທດເຮົາກໍ່ເປັນປະເທດໜຶ່ງທີ່ຖືກຜົນກະທົບດັ່ງກ່າວ ແລະ ເລີ່ມນັບມື້ມີຄວາມຮຸນແຮງຫຼາຍຂຶ້ນ. ດັ່ງນັ້ນ, ພັກ ແລະ ລັດຖະບານລາວເຮົາ ຈຶ່ງໄດ້ກຳນົດນະໂຍບາຍກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ເປັນແຕ່ລະໄລຍະ ເຊິ່ງຄາດໝາຍ ປີ **2020** ຄື: ສູ້ຊົນຍົກລະດັບຄວາມປົກຫຸ້ມປ່າໄມ້ໃຫ້ໄດ້ **70%** ດ້ວຍການຟື້ນຟູປ່າທຳມະຊາດໃຫ້ໄດ້ **6 ລ້ານ** ເຮັກຕາ ແລະ ປູກໄມ້ໃຫ້ໄດ້ **5 ແສນ** ເຮັກຕາ.

ໃນວັນທີ **01 ມິຖຸນາ 2016** ຜ່ານມານີ້ **ກະຊວງກະສິກຳ ແລະປ່າໄມ້** ໄດ້ຈັດພິທີປູກຕົ້ນໄມ້ຢູ່ທີ່ **ສູນຄົ້ນຄ້ວາວິທະຍາສາດປ່າໄມ້ນ້ຳຊວງ** ໂດຍແມ່ນ **ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ** ເປັນປະທານພິທີໃນຄັ້ງນີ້. ການປູກຕົ້ນໄມ້ໃນຄັ້ງນີ້ມີເນື້ອທີ່ **5 ເຮັກຕາ** ແລະ ຕົ້ນໄມ້ທີ່ຈະປູກມີ **4,200 ກວ່າຕົ້ນ** ລວມມີພັນໄມ້ຕ່າງໆຄື: ໄມ້ຂະຍຸງ, ໄມ້ຄຳພີ, ໄມ້ດູ່, ໄມ້ແຕ້ຄ່າ ແລະ ໄມ້ແດງໂດຍໄດ້ຮັບຄວາມສົນໃຈ ແລະມີການເຂົ້າຮ່ວມຈາກຫຼາຍພາກສ່ວນເຊັ່ນ: ອົງການຈັດຕັ້ງພາກລັດ, ເອກະຊົນ, ອ້າຍ-ນ້ອງທະຫານ, ປະຊາຊົນ ແລະນັກຮຽນ-ນັກສຶກສາ ເຂົ້າຮ່ວມພິທີຢ່າງພ້ອມພຽງ. ໃນນັ້ນ **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ກໍ່ໄດ້ເຫັນຄວາມສຳຄັນໃນພິທີດັ່ງກ່າວ ແລະໄດ້ມີການປະກອບສ່ວນອຸປະຖຳເປັນເງິນຈຳນວນ **2,000,000 ກີບ** ພ້ອມດ້ວຍພະນັກງານ ທຄຕລ ຈຳນວນໜຶ່ງຕາງໜ້າເຂົ້າຮ່ວມພິທີ.

ຈຸດປະສົງຫຼັກໃນການຈັດພິທີປູກຕົ້ນໄມ້ແຫ່ງຊາດປະຈຳປີ 2016 ແມ່ນເພື່ອໃຫ້ເຫັນຄວາມສຳຄັນຂອງປ່າໄມ້ ພ້ອມທັງເປັນການໂຄສະນາເຜີຍແຜ່ໃຫ້ທຸກຄົນໃນທົ່ວສັງຄົມໄດ້ຮັບຮູ້ວ່າການປູກຕົ້ນໄມ້ແມ່ນການຮັກສາລະບົບນິເວດຂອງທຳມະຊາດໃຫ້ມີຄວາມສົມດຸນ. ການປູກຕົ້ນໄມ້ເປັນໜ້າທີ່ຂອງໝົດທຸກຄົນຈະຕ້ອງຊ່ວຍກັນປູກຄຽງຄູ່ກັນກັບການມີໜ້າທີ່ປົກປັກຮັກສາປ່າໄມ້ກໍ່ຄືການຮັກສິ່ງແວດລ້ອມສອດຄ່ອງກັບແນວທາງ “ **6 ສ**“ ຂອງພັກ ແລະ ລັດຖະບານລາວເຮົາ.




ພາບ ແລະຂຽນຂ່າວໂດຍ : ສຸລິຍົງສຸກຈັນດີ